


# ຊົມເຊີຍ ຜົນສຳເລັດ
# ກອງປະຊຸມສະໄໝສາມັນ ຜູ້ຖືຮຸ້ນ ທຄຕລ ປະຈຳປີ 2025






## ໃນວັນພະຫັດ, ວັນທີ 30 ເມສາ 2026

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ໄດ້ຈັດກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2025 ຢູ່ທີ່ ໂຮງແຮມ ລາວພລາຊາ ນະຄອນຫຼວງວຽງຈັນ, ໃຫ້ກຽດເຂົ້າຮ່ວມເປັນປະທານກອງປະຊຸມໂດຍ **ທ່ານ ນ. ບຸນຕາ ດາຣາວີ (ຮອງປະທານສະພາບໍລິຫານ ທຄຕລ)**, ກອງປະຊຸມມີຜູ້ຖືຮຸ້ນ ເຂົ້າຮ່ວມດ້ວຍຕົນເອງ **76 ທ່ານ** ແລະ ຜູ້ມອບສິດ **470 ທ່ານ** ລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມ ເທົ່າກັບ **1,420,723,090 ຮຸ້ນ** (ກວມເອົາ **91.964%** ຂອງ ຈຳນວນຮຸ້ນ ທຄຕລ ທັງໝົດ).



ນອກນັ້ນ, ຍັງມີຜູ້ຕາງໜ້າຈາກ ຫ້ອງການຄະນະປະຕິຮູບລັດວິສາຫະກິດ, ກົມຄຸ້ມຄອງທະນາຄານທຸລະກິດ, ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ເຂົ້າຮ່ວມຕິດຕາມກອງປະຊຸມອີກດ້ວຍ. ກອງປະຊຸມຄັ້ງນີ້ ໄດ້ດຳເນີນແຕ່ລະວາລະຢ່າງຄົບຖ້ວນ ພ້ອມທັງໄດ້ເປີດໂອກາດໃຫ້ແກ່ຜູ້ຖືຮຸ້ນ ໄດ້ສອບຖາມບັນດາຂໍ້ສົນໃຈຕ່າງໆ ແລະ ຄະນະບໍລິຫານ ທຄຕລ ກໍ່ໄດ້ອະທິບາຍຊີ້ແຈງ ໃນແຕ່ລະບັນຫາຢ່າງກົງໄປກົງມາ ເຊິ່ງກອງປະຊຸມໄດ້ມີການພິຈາລະນາ ແລະ ຮັບຮອງບັນຫາສຳຄັນຕ່າງໆ ດັ່ງນີ້:

1). ຮັບຮອງ ບົດບັນທຶກກອງປະຊຸມສະໄໝວິສາມັນ ຜູ້ຖືຮຸ້ນ ທຄຕລ ປະຈຳປີ 2025;

2). ຮັບຊາບ ການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດການເພີ່ມທຶນຈົດທະບຽນຂອງ ທຄຕລ, ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ທະນາຄານ BFL ແລະ ບໍລິສັດ EDL-Gen;

3). ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025;

4). ຮັບຮອງ ການຈັດສັນກຳໄລປະຈຳປີ 2025, ໂດຍຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຈຳນວນ **200 ກີບ/ຮຸ້ນ** ລວມມູນຄ່າປັນຜົນທັງໝົດ **308,974,400,000 ກີບ**;

5). ຮັບຮອງ ແຜນການປະຈຳປີ 2026;

6). ຮັບຮອງ ການແຕ່ງຕັ້ງຜູ້ກວດສອບອິດສະລະ ປະຈຳປີ 2026, 2027 ແລະ 2028;

7). ຮັບຮອງ ແຜນນຳໃຊ້ທຶນທີ່ລະດົມໄດ້ ຈາກການອອກຈຳໜ່າຍຮຸ້ນເພີ່ມທຶນ ທຄຕລ;

8). ຮັບຮອງ ການປັບປຸງກົດລະບຽບຂອງ ທຄຕລ;

9). ຮັບຮອງ ການປັບປຸງດັດສະນີ ເງິນເດືອນພື້ນຖານພະນັກງານ ທຄຕລ.

ໃນກອງປະຊຸມດັ່ງກ່າວ **ທ່ານ ນ. ສາຍສະໝອນ ຈັນທະຈັກ (ຜູ້ອຳນວຍການ ທຄຕລ)** ກໍໄດ້ກ່າວໃຫ້ຄວາມໝັ້ນໃຈຕໍ່ຜູ້ຖືຮຸ້ນ ທຄຕລ ວ່າ ຄະນະບໍລິຫານ ທຄຕລ ຈະສືບຕໍ່ສູ້ຊົນຈັດຕັ້ງປະຕິບັດແຜນທຸລະກິດປະຈຳປີ 2026 ໃຫ້ສາມາດບັນລຸເປົ້າໝາຍ ແລະ ສ້າງຜົນກຳໄລສູງສຸດ ເພື່ອຮັກສາຜົນປະໂຫຍດຂອງອົງກອນ ແລະ ຜູ້ຖືຮຸ້ນ, ໂດຍກອງປະຊຸມໄດ້ດຳເນີນໄປຢ່າງມີຜົນສຳເລັດອັນຈົບງາມ.